ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສຳນັກງານນາຍົກລັດຖະມົນຕີ

ເລກທີ: ..238../ນຍ.

ນະຄອນຫລວງວຽງຈັນ, ວັນທີ: ..11-08-2005

# ດຳລັດ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍ ກອງທຶນພັດທະນາໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ່ 02/ສພຊ, ລົງວັນທີ່ 06 ພຶດສະພາ 2003.
- ອີງຕາມມາດຕາ 41 ຂອງກົດໝາຍ ວ່າດ້ວຍໄຟຟ້າ ເລກທີ່ 02/97/ສພຊ, ລົງວັນທີ 12 ເມສາ1997.
- ອີງຕາມໜັງສືສະເໜີຂອງ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ: 300/ອຫ, ລົງວັນທີ: 24 ມິຖຸນາ 2005.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ່ I
## ບົດບັນຍັດທົ່ວໄປ

**ມາດຕາ 01: ຈຸດປະສົງຂອງດຳລັດ**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງບໍລິຫານ ແລະ ການກວດກາກອງທຶນພັດທະນາໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ ແນໃສ່ລະດົມທຶນຈາກຜູ້ຊົມໃຊ້ ໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ ແລະ ແຫລ່ງທຶນອື່ນໆເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍ ວຽກງານສົ່ງເສີມໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ ແລະ ການ

ພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ ໃຫ້ມີການຂະຫຍາຍຕົວ ເຮັດໃຫ້ປະຊາຊົນທົ່ວປະເທດ ມີຄວາມສາມາດຊົມໃຊ້ໄຟຟ້າໄດ້ຢ່າງທົ່ວເຖິງ ແລະ ຍົກລະດັບ ຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເປັນກ້າວໆ.

**ມາດຕາ 02: ຄໍານິຍາມ**

"**ກອງທຶນພັດທະນາໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ**" ແມ່ນກອງທຶນໝູນວຽນ ທີ່ສ້າງຕັ້ງຂຶ້ນດ້ວຍລາຍຮັບ ທີ່ໄດ້ຈາກຜູ້ຊົມໃຊ້ໄຟຟ້າ, ພາກສ່ວນ ການຄ້າ, ຜູ້ໃຫ້ທຶນກູ້ຢືມ ແບບມີເງື່ອນໄຂ ແລະ ບໍ່ມີເງື່ອນໄຂ, ຜູ້ໃຫ້ທຶນຊ່ວຍເຫລືອລ້າ, ງົບປະມານຂອງລັດ ແລະ ແຫລ່ງທຶນອື່ນໆ ເພື່ອຈຸດປະສົງ ໃນການຂະຫຍາຍໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ.

## ໝວດທີ່ II
## ການສ້າງຕັ້ງ ແລະ ການຄຸ້ມຄອງ ບໍລິຫານກອງທຶນ

**ມາດຕາ 03: ຈຸດປະສົງສະເພາະຂອງກອງທຶນ**

1. ເປັນບ່ອນສະສົມ ແລະ ຈັດຫາທຶນຈາກຜູ້ຊົມໃຊ້, ພາກສ່ວນການຄ້າ ແລະ ຜູ້ໃຫ້ທຶນກູ້ຢືມແບບມີເງື່ອນໄຂ ຫຼື ບໍ່ມີເງື່ອນໄຂ, ຜູ້ຊ່ວຍເຫລືອລ້າ ແລະ ແຫລ່ງອື່ນໆ;
2. ມີກອງທຶນທີ່ພຽງພໍ ເພື່ອສະໜັບສະໜູນ ການພັດທະນາລະບົບໄຟຟ້າທ້ອງຖິ່ນ ແລະ ຊົນນະບົດໃນຂອບເຂດທົ່ວປະເທດ ເພື່ອຍົກລະດັບຄຸນນະພາບຊີວິດ ຂອງຊາວບ້ານໃນເຂດຊົນນະບົດ.
3. ຮ່ວມມືກັບພາກສ່ວນເອກະຊົນ ເພື່ອສະໜອງໄຟຟ້າໃຫ້ແກ່ປະຊາຊົນ ທີ່ຢູ່ຊົນນະບົດຫ່າງໄກ ສອກຫລີກ ຕາມນະໂຍບາຍດ້ານພະລັງງານຂອງ ສປປ ລາວ;

**ມາດຕາ 04: ຫລັກການນໍາໃຊ້ກອງທຶນ**

ກອງທຶນ ຈະຕ້ອງນໍາໃຊ້ເຂົ້າໃນການຂະຫຍາຍໄຟຟ້າທ້ອງຖິ່ນ ແລະ ຊົນນະບົດໃນຂອບເຂດທົ່ວປະເທດເທົ່ານັ້ນ, ສ່ວນການຈ່າຍເງິນຈາກກອງທຶນ ແມ່ນໄດ້ລະບຸໄວ້ໃນ ມາດຕາ 27 ຂອງດໍາລັດສະບັບນີ້.

**ມາດຕາ 05: ຫລັກການໃນການຄຸ້ມຄອງກອງທຶນ**

ທຸກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນ ຈະຕ້ອງມີການສະຫລຸບ, ກວດກາ ແລະ ຕີລາຄາ ເປັນແຕ່ລະໄລຍະ, ຮັບປະກັນຄວາມໂປ່ງໃສໃນການບໍລິຫານແນ່ໃສ່ເພື່ອປັບປຸງແກ້ໄຂວຽກງານກອງທຶນ ໃຫ້ບັນລຸຕາມເປົ້າໝາຍ ແລະ ມີປະສິດທິຜົນສູງສຸດ.

**ມາດຕາ 06: ໂຄງຮ່າງການຈັດຕັ້ງເພື່ອຄຸ້ມຄອງ-ບໍລິຫານກອງທຶນ**

ກອງທຶນ ຈະຕ້ອງຄຸ້ມຄອງບໍລິຫານ ດ້ວຍພາກສ່ວນຕ່າງໆ, ຊຶ່ງອີງຕາມໜ້າທີ່ ທີ່ໄດ້ລະບຸໄວ້ ໃນດຳລັດສະບັບນີ້ ເຊັ່ນ:

- ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ;
- ສະພາທີ່ປຶກສາກອງທຶນ;
- ຄະນະອຳນວຍການກອງທຶນ; ແລະ
- ກອງເລຂາກອງທຶນ.

**ມາດຕາ 07: ພາລະບົດບາດ ແລະ ໜ້າທີ່ ຂອງ ກະຊວງອຸດສາຫະກຳ ແລະ ຫັດຖະກຳ**

ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ມີໜ້າທີ່ໃນການຄຸ້ມຄອງກອງທຶນ ດັ່ງລຸ່ມນີ້:

1. ອຳນວຍຄວາມສະດວກ ໃຫ້ອົງການຄຸ້ມຄອງ ແລະ ບໍລິຫານກອງທຶນເຄື່ອນໄຫວ ຢ່າງມີປະສິດທິຜົນ;
2. ຮັບຮອງອະນຸມັດ ແຜນການເຄື່ອນໄຫວ, ແຜນລາຍຮັບ-ລາຍຈ່າຍ ປະຈຳປີ ແລະ ມາດຕະການ ຈັດຕັ້ງປະຕິບັດແຜນການ ຂອງກອງທຶນ ທີ່ສະພາທີ່ປຶກສາກອງທຶນໄດ້ພິຈາລະນາຕົກລົງ ແລະ ສະເໜີມາ;
3. ຂຶ້ນແຜນງົບປະມານປະຈຳປີ ເພື່ອປະກອບສ່ວນເຂົ້າຄັງ ຂອງກອງທຶນ; ຊີ້ນຳ-ແນະນຳ ແລະ ຕິດຕາມ ການໃຊ້ຈ່າຍເງິນ ໃຫ້ຖືກຕ້ອງ ຕາມເປົ້າໝາຍ, ປະຢັດ ແລະ ສອດຄ່ອງກັບລະບຽບການ ຂອງລັດ ວາງອອກ;
4. ຮັບຮອງເອົາບົດລາຍງານ, ບົດກວດສອບບັນຊີ ຕາມການສະເໜີຂອງສະພາທີ່ປຶກສາກອງທຶນ;
5. ຮັບຮອງ ແລະ ແຕ່ງຕັ້ງ ບຸກຄະລາກອນ ຕາມການສະເໜີຂອງສະພາທີ່ປຶກສາກອງທຶນ.

**ມາດຕາ 08: ສະມາຊິກຂອງສະພາທີ່ປຶກສາກອງທຶນ**

ສະມາຊິກສະພາທີ່ປຶກສາກອງທຶນປະກອບດ້ວຍ 07 ທ່ານດັ່ງລຸ່ມນີ້:

- ຜູ້ຕາງໜ້າຈາກ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ໜຶ່ງທ່ານ;
- ຜູ້ຕາງໜ້າຈາກ ກະຊວງການເງິນ ໜຶ່ງທ່ານ;
- ຜູ້ຕາງໜ້າຈາກ ກະຊວງກະສິກຳ ແລະ ປ່າໄມ້ ໜຶ່ງທ່ານ;
- ຜູ້ຕາງໜ້າຈາກຄະນະກຳມະການແຜນການ ແລະ ການລົງທຶນໜຶ່ງທ່ານ;
- ຜູ້ຕາງໜ້າຈາກ ທະນາຄານແຫ່ງຊາດໜຶ່ງທ່ານ;
- ຜູ້ຕາງໜ້າຈາກ ລັດວິສະຫະກິດໄຟຟ້າລາວໜຶ່ງທ່ານ;
- ຜູ້ຕາງໜ້າບໍລິສັດບໍລິການໄຟຟ້າຊົນນະບົດທີ່ຮັບການຊ່ວຍເຫລືອຈາກກອງທຶນໜຶ່ງທ່ານ.

**ມາດຕາ 09: ໜ້າທີ່ ແລະ ຂອບເຂດສິດ ຂອງສະພາທີ່ປຶກສາກອງທຶນ**

**ສະພາທີ່ປຶກສາກອງທຶນ ມີໜ້າທີ່ຮັບຜິດຊອບດັ່ງຕໍ່ລົງໄປນີ້:**

1. ຮັບຮອງເອົາ ລະບຽບການ ທີ່ລະອຽດ ເພື່ອຄຸ້ມຄອງກອງທຶນ;
2. ພິຈາລະນາຕົກລົງ ກ່ຽວກັບ ແຜນການເຄື່ອນໄຫວ, ແຜນລາຍຮັບ-ລາຍຈ່າຍ ປະຈຳປີ ແລະ ມາດຕະການ ຈັດຕັ້ງປະຕິບັດແຜນການ ເພື່ອສະເໜີ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ອະນຸມັດ ຫລັງຈາກນັ້ນ ຊີ້ນຳປະຕິບັດໃຫ້ໄດ້ຮັບຜົນດີ;
3. ພິຈາລະນາອະນຸມັດ ໂຄງການພັດທະນາໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ;
4. ເລືອກຕັ້ງປະທານ, ຮອງປະທານ ສະພາທີ່ປຶກສາ ແລະ ຄະນະອຳນວຍການ ບໍລິຫານກອງທຶນ ເພື່ອສະເໜີ ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ຫັດຖະກຳ ແຕ່ງຕັ້ງ;
5. ໜ້າທີ່ຮັບຜິດຊອບອື່ນໆຕາມການມອບໝາຍຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ຫັດຖະກຳ.

**ມາດຕາ 10: ຕຳແໜ່ງ ແລະ ໜ້າທີ່ຂອງສະມາຊິກ ສະພາທີ່ປຶກສາກອງທຶນ**

ສະມາຊິກສະພາທີ່ປຶກສາກອງທຶນມີຕຳແໜ່ງ ແລະ ຄວາມຮັບຜິດຊອບດັ່ງຕໍ່ລົງໄປນີ້:

- ປະທານໜຶ່ງທ່ານ, ຮອງປະທານສອງທ່ານ ແລະ ສະມາຊິກສີ່ທ່ານ, ຊຶ່ງໄດ້ຮັບການແຕ່ງຕັ້ງ ໂດຍ ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ອີງຕາມ ມາດຕາ9 ຂອງ ດຳລັດສະບັບນີ້;
- ຮອງປະທານ ແມ່ນຜູ້ຊ່ວຍວຽກຂອງປະທານ, ຊຶ່ງເປັນຜູ້ປະຕິບັດພາລະບົດບາດ ແລະ ເຮັດໜ້າທີ່ແທນ ປະທານ ຫຼື ຕາມການມອບໝາຍຂອງປະທານ;
- ຜູ້ຕາງໜ້າຈາກ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ຈະເປັນປະທານ ຄະນະທີ່ປຶກສາກອງທຶນ;
- ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ເປັນຜູ້ແຕ່ງຕັ້ງ ຫລື ປົດຕຳແໜ່ງ ຮອງປະທານຜູ້ທີນຶ່ງ ແລະ ຜູ້ທີສອງ ຕາມການສະເໜີຂອງປະທານ ສະພາທີ່ປຶກສາ ກອງທຶນ;
- ສະພາທີ່ປຶກສາກອງທຶນ ມີອາຍຸການດຳລົງຕຳແໜ່ງ ສະໄໝລະ 3(ສາມ) ປີ, ແຕ່ອາຍຸການດຳລົງຕຳແໜ່ງ ຂອງແຕ່ລະທ່ານ ອາດຈະຕໍ່ໄດ້ອີກບໍ່ເກີນໜຶ່ງສະໄໝ;
- ສະມະຊິກຄະນະທີ່ປຶກສາອາດຈະມີການປ່ຽນແປງ ໂດຍອີງໃສ່ສຽງສ່ວນຫລາຍຂອງ ຄະນະທີ່ປຶກສາ;
- ໃນກໍລະນີ ສະມາຊິກຜູ້ໃດໜຶ່ງອອກກ່ອນໝົດກຳນົດ ເນື່ອງຈາກວ່າ ບໍ່ສາມາດ ດຳເນີນງານຕໍ່ໄປ ດວ້ຍເຫດຜົນດ້ານສຸຂະພາບ, ການຊັບຊ້ອນໂຍກຍ້າຍ, ຂາດຄວາມສາມາດ ໃນການປະຕິບັດໜ້າທີ່ ຫຼື ເຫດຜົນອື່ນໆ. ແຕ່ ອາຍຸປະຈຳການ ຂອງຜູ້ທີ່ ຖືກປ່ຽນແທນ ແມ່ນເທົ່າກັບ ອາຍຸການຂອງຜູ້ເກົ່າ ທີ່ຍັງເຫລືອຢູ່ນັ້ນ;

- ລະບຽບການລະອຽດ ກ່ຽວກັບ ການຄັດເລືອກສະມາຊິກມາປ່ຽນແທນນັ້ນ ມອບໃຫ້ ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ເປັນເຈົ້າການ ສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຜູ້ ວາງອອກ.

**ມາດຕາ 11: ເງື່ອນໄຂຂອງຜູ້ທີ່ຈະມາເປັນສະມາຊິກສະພາທີ່ປຶກສາກອງທຶນ**

ສະມາຊິກສະພາທີ່ປຶກສາກອງທຶນທຸກທ່ານ ຈະຕ້ອງມີເງື່ອນໄຂດັ່ງຕໍ່ລົງໄປນີ້:

1. ເປັນຜູ້ຕາງໜ້າຈາກກະຊວງກ່ຽວຂ້ອງ, ຊຶ່ງມີຕຳແໜ່ງຮອງຫົວໜ້າກົມຂຶ້ນໄປ ແລະໄດ້ຮັບການແຕ່ງຕັ້ງຢ່າງເປັນທາງການ ຈາກກະຊວງ ຫຼື ອົງການຈັດຕັ້ງກ່ຽວຂ້ອງ ເພື່ອ ເຂົ້າມາເປັນສະມາຊິກ ສະພາທີ່ປຶກສາກອງທຶນ;
2. ມີປະສົບການດ້ານການຄຸ້ມຄອງ ບໍລິຫານທຸລະກິດ ຫຼື ການບໍລິຫານທົ່ວໄປ, ດ້ານການເງິນ, ການຄຸ້ມຄອງກອງທຶນ, ໄຟຟ້າຊົນນະບົດ ຫຼື ການພັດທະນາຊົນນະບົດ;
3. ມີສຸຂະພາບແຂງແຮງດີ;
4. ມີຊີວະປະຫວັດຈະແຈ້ງ ແລະ ບໍ່ເຄີຍຖືກດຳເນີນຄະດີ.

ມາດຕາ 12: ວາລະປະຊຸມຂອງສະພາທີ່ປຶກສາກອງທຶນ

ປະທານສະພາທີ່ປຶກສາກອງທຶນ ເປັນຜູ້ຮຽກປະຊຸມຕາມວາລະຕ່າງໆດັ່ງລຸ່ມນີ້:

- ກອງປະຊຸມສະໄໝສາມັນຂອງສະພາທີ່ປຶກສາກອງທຶນ ຈະເປີດຂຶ້ນຢ່າງໜ້ອຍ 4(ສີ່) ຄັ້ງຕໍ່ປີ;
- ກອງປະຊຸມວິສາມັນສາມາດເປີດຂຶ້ນໃນເວລາໃດກໍ່ໄດ້ອີງຕາມຄວາມຈຳເປັນຂອງວຽກງານ;
- ໃນກໍລະນີຈຳເປັນ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ອາດຈະຮຽກຮ້ອງໃຫ້ ປະທານສະພາທີ່ປຶກສາກອງທຶນ ເປີດປະຊຸມຂຶ້ນ, ຊຶ່ງທາງກະຊວງອາດຈະກຳນົດຫົວຂໍ້ປະຊຸມໃຫ້ ຢ່າງເປັນລາຍລັກອັກສອນ, ຕາມທີ່ລັດຖະມົນຕີ ຢາກຈະໃຫ້ ສະພາທີ່ປຶກສາ ພິຈາລະນາ ເປັນການສະເພາະໃນກອງປະຊຸມ;
- ກອງປະຊຸມແຕ່ລະຄັ້ງ ສາມາດເປີດຂຶ້ນໄດ້ກໍ່ຕໍ່ເມື່ອ ມີສະມາຊິກເຂົ້າຮ່ວມຫລາຍກວ່າເຄິ່ງໜຶ່ງຂຶ້ນໄປ;
- ການຕັດສິນທຸກບັນຫາ ກ່ຽວກັບກອງທຶນ ຈະຕ້ອງອີງໃສ່ສຽງສ່ວນຫລາຍ ຂອງຜູ້ທີ່ເຂົ້າຮ່ວມກອງປະຊຸມ, ໃນກໍລະນີມີສຽງເທົ່າກັນ ສຽງຂອງປະທານເປັນອັນຊີ້ຂາດ;
- ຜູ້ຈັດການ ແລະ ຫົວໜ້າກອງເລຂາ ຂອງກອງທຶນ ມີສິດເຂົ້າຮ່ວມກອງປະຊຸມ ຂອງຄະນະທີ່ປຶກສາ ແລະ ມີສິດອອກຄຳຄິດຄຳເຫັນຕ່າງໆໄດ້, ແຕ່ບໍ່ມີສິດ ລົງຄະແນນສຽງ.

**ມາດຕາ 13: ເບັຍລ້ຽງປະຊຸມຂອງສະມາຊິກສະພາທີ່ປຶກສາກອງທຶນ**

ເບັຍລ້ຽງປະຊຸມຂອງສະມາຊິກ ແລະ ຄ່າບໍລິຫານວຽກງານ ຂອງສະພາທີ່ປຶກສາກອງທຶນ ແມ່ນໃຫ້ປະຕິບັດຕາມລະບຽບການ ຂອງກະຊວງການເງິນໄດ້ກຳນົດໄວ້.

**ມາດຕາ 14: ການຍຸບເລີກສະພາທີ່ປຶກສາກອງທຶນ**

ສະພາທີ່ປຶກສາກອງທຶນ ອາດຈະຖືກຍຸບເລີກດ້ວຍເຫດຜົນຢ່າງໃດຢ່າງໜຶ່ງ ເຊັ່ນ: ລະເມີດຕໍ່ດຳລັດ ແລະ ລະບຽບການຕ່າງໆຂອງກອງທຶນ ຫລື ຂາດຄວາມສາມາດ ໃນການປະຕິບັດໜ້າທີ່ວຽກງານ ຕາມທີ່ໄດ້ ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 15: ຄະນະອຳນວຍການບໍລິຫານກອງທຶນ**

ສະມາຊິກຄະນະອຳນວຍການບໍລິຫານກອງທຶນປະກອບດ້ວຍ 03 (ສາມ) ທ່ານ ດັ່ງລຸ່ມນີ້:

- ຫົວໜ້າອຳນວຍການ;
- ຮອງອຳນວຍການ;
- ຜູ້ກວດກາ.

**ມາດຕາ 16: ໜ້າທີ່ ແລະ ຂອບເຂດສິດຂອງ ຄະນະອຳນວຍການບໍລິຫານກອງທຶນ**

- ສ້າງລະບຽບການທີ່ລະອຽດເພື່ອຄຸ້ມຄອງກອງທຶນແລ້ວນຳສະເໜີຕໍ່ສະພາທີ່ປຶກສາກອງທຶນ;
- ພິຈາລະນາແຜນການເຄື່ອນໄຫວ, ແຜນລາຍຮັບ-ລາຍຈ່າຍ ປະຈຳປີ ແລະ ມາດຕະການຈັດຕັ້ງປະຕິບັດແຜນການ ທີ່ກອງເລຂາກອງທຶນ ສະເໜີມາ ເພື່ອສະເໜີຕໍ່ສະພາທີ່ປຶກສາກອງທຶນພິຈາລະນາຕົກລົງ;
- ສົມທົບກັບ ບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງຄົ້ນຄວ້າ ກ່ຽວກັບໂຄງການພັດທະນາໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ ເພື່ອສະເໜີຂໍອະນຸມັດ;
- ຕິດຕາມ ແລະ ລາຍງານ ກ່ຽວກັບວຽກງານຂອງກອງເລຂາ ໃຫ້ສະພາທີ່ປຶກສາກອງທຶນໄດ້ຊາບ;
- ອະນຸມັດແຜນປະຕິບັດວຽກ ແລະ ແຜນລາຍຮັບ-ລາຍຈ່າຍຂອງກອງເລຂາ ໂດຍອີງຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນລະບຽບການດ້ານການເງິນຂອງກອງທຶນ.

**ມາດຕາ 17: ກອງເລຂາກອງທຶນ**

ກອງທຶນຈະຕ້ອງມີກອງເລຂາ ເພື່ອປະຕິບັດໜ້າທີ່ດັ່ງຕໍ່ລົງໄປນີ້:

- ຄົ້ນຄວ້າແຜນການເຄື່ອນໄຫວ, ແຜນລາຍຮັບ-ລາຍຈ່າຍ ປະຈຳປີ ແລະ ມາດຕະການຈັດຕັ້ງປະຕິບັດແຜນການ ເພື່ອສະເໜີຕໍ່ຄະນະອຳນວຍການບໍລິຫານກອງທຶນພິຈາລະນາ.
- ຈັດຕັ້ງປະຕິບັດກອງທຶນ ໃຫ້ເປັນໄປຕາມຂັ້ນຕອນ ທີ່ກຳນົດໄວ້ ໃນລະບຽບການຕ່າງໆ ທີ່ສະພາທີ່ປຶກສາກອງທຶນ ໄດ້ອະນຸມັດອອກໃຊ້ຢ່າງເປັນທາງການ;
- ກະກຽມເອກະສານຕ່າງໆກ່ຽວກັບ ຂໍ້ຕົກລົງ ແລະ ເຊັນສັນຍາ ກ່ຽວກັບໂຄງການຕ່າງໆ ກ່ອນຈະນຳສະເໜີທ່ານ ຄະນະອຳນວຍການກອງທຶນ ເພື່ອລົງລາຍເຊັນ ຮ່ວມກັບ ບໍລິສັດບໍລິການໄຟຟ້າ ແລະ ນິຕິບຸກຄົນອື່ນໆ ໂດຍການເຫັນດີຂອງສະພາທີ່ປຶກສາກອງທຶນ;
- ຈັດຕັ້ງປະຕິບັດແຜນການທີ່ໄດ້ຮັບອະນຸມັດແລ້ວ ໃຫ້ປາກົດຜົນເປັນຈິງ;

- ສົ່ງເສີມການທົດລອງ ພະລັງງານຫລາຍຮູບແບບ ທີ່ທາງກະຊວງອຸດສາຫະກໍາ ແລະ ຫັດຖະກໍາ ມອບຫມາຍໃຫ້ ແລະ ຕາມທີ່ໄດ້ລະບຸໄວ້ໃນລະບຽບການຕ່າງໆ;
- ຈັດຕັ້ງປະຕິບັດວຽກງານການຕິດຕາມ, ກວດກາການເກັບເງິນເຂົ້າກອງທຶນ;
- ລາຍງານປະຈໍາເດືອນ, ປະຈໍາງວດ ແລະ ປະຈໍາປີ ໃຫ້ ຄະນະອໍານວຍການກອງທຶນ ແລະ ສະພາທີ່ປຶກສາ.

**ມາດຕາ 18: ການຈ້າງງານຈາກພາຍນອກ**

- ຄະນະອໍານວຍການກອງທຶນສາມາດຈ້າງບຸກຄົນ ຫຼື ນິຕິບຸກຄົນເພື່ອມາເປັນບຸກຄະລາກອນຂອງກອງເລຂາ ໂດຍການເຫັນດີຈາກ ສະພາທີ່ປຶກສາກອງທຶນ;
- ການຕົກລົງຮັບຮອງເອົາບຸກຄົນ ຫຼື ນິຕິບຸກຄົນເຂົ້າມາເຮັດວຽກ ໃຫ້ແກ່ກອງເລຂານັ້ນ ແມ່ນຈະຕ້ອງອີງໃສ່ສັນຍາ, ຊຶ່ງສັນຍາດັ່ງກ່າວ ຈະຕ້ອງໄດ້ລະບຸລາຍລະອຽດ ກ່ຽວກັບເງື່ອນໄຂການປະຕິບັດວຽກງານລວມ ທັງເງື່ອນໄຂການຈ່າຍເງິນ, ທັງຫມົດນີ້ຈະຕ້ອງໄດ້ຮັບການອະນຸມັດ ໂດຍສະພາທີ່ປຶກສາກອງທຶນ.

**ມາດຕາ 19: ພາສີ ແລະ ພັນທະຕ່າງໆ**

ພາຍໃຕ້ ຂໍ້ຕົກລົງ ຫຼື ສັນຍາ ການຊ່ວຍເຫລືອດ້ານການເງິນໃຫ້ແກ່ກອງທຶນ, ໃນກໍລະນີ ມີການຮຽກຮ້ອງຈາກຜູ້ໃຫ້ທຶນ, ການນໍາເຂົ້າວັດຖຸອຸປະກອນ ແລະ ພາຫານະ ຈະຕ້ອງໄດ້ຮັບການຫລຸດຜ່ອນ ຫລື ຍົກເວັ້ນພາສີນໍາເຂົ້າ ຕາມກົດຫມາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 20: ການເປີດເຜີຍຜົນປະໂຫຍດ**

ໃນກໍລະນີ ສະມາຊິກຜູ້ໃດຫນຶ່ງ ຂອງສະພາທີ່ປຶກສາກອງທຶນ, ຜູ້ອໍານວຍການກອງທຶນ ຫລື ກອງເລຂາ ມີສ່ວນພົວພັນ ຫລື ໄດ້ຮັບການຊຸກຍູ້ໃຫ້ມີການພົວພັນ ກັບ ບຸກຄົນ ຫລື ນິຕິບຸກຄົນເພື່ອໃຫ້ຮັບຜົນປະໂຫຍດ, ຊຶ່ງບຸກຄົນ ຫລື ນິຕິບຸກຄົນດັ່ງກ່າວ ເປັນຜູ້ທີ່ໄດ້ຮັບທຶນ ຈາກກອງທຶນ, ສະມາຊິກສະພາທີ່ປຶກສາກອງທຶນ, ຜູ້ອໍານວຍການກອງທຶນ ຫຼື ພະນັກງານ ກອງເລຂາກອງທຶນດັ່ງກ່າວຈະຕ້ອງ ແຈ້ງເຈດຈໍານົງ ຂອງການພົວພັນດັ່ງກ່າວ ໃຫ້ແກ່ຄະນະທີ່ປຶກສາກອງທຶນຊາບ;

ສະພາທີ່ປຶກສາກອງທຶນ ສາມາດສະເໜີໃຫ້ບຸກຄົນ ຫຼື ນິຕິບຸກຄົນຢຸດຕິການກະທໍາ ດັ່ງກ່າວ ຫລື ມີການແນະນໍາຕ່າງໆ ທີ່ສະພາທີ່ປຶກສາກອງທຶນເຫັນວ່າມີຄວາມເຫມາະສົມ.

**ມາດຕາ 21: ການຢຸດຕິຊົ່ວຄາວ ແລະ ການຍຸບເລີກກອງທຶນ**

ໃນກໍລະນີ ກອງທຶນຈະຖືກ ຢຸດຕິຊົ່ວຄາວ ຫລື ປ່ຽນແປງນັ້ນ ແມ່ນ ສະພາທີ່ປຶກສາກອງທຶນ ເປັນຜູ້ນໍາສະເຫນີຕໍ່ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ຫັດຖະກໍາ ເປັນຜູ້ອະນຸມັດ;

ໃນກໍລະນີ ກອງທຶນຈະຖືກຍຸບເລີກ, ຄະນະ ທີ່ປຶກສາກອງທຶນເປັນຜູ້ສະເໜີ ຕໍ່ ລັດຖະມົນຕີ ວ່າການກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ເພື່ອນຳສະເໜີຕໍ່ລັດຖະບານເປັນຜູ້ອະນຸມັດ.

ໃນກໍລະນີ ກອງທຶນຢຸດຕິຊົ່ວຄາວເກີນ12 ເດືອນ ຫຼື ຍຸບເລີກ, ເງິນກູ້, ຊ່ວຍເຫຼືອລ້າ ແມ່ນຈະ ປະຕິບັດຕາມເງື່ອນໄຂຂອງສັນຍາທີ່ໄດ້ເຊັນກັນກັບຜູ້ໃຫ້ທຶນ;

## ໝວດທີ III
## ລະບຽບການເງິນຂອງກອງທຶນ

**ມາດຕາ 22: ແຫລ່ງລາຍຮັບຂອງກອງທຶນ**

ກອງທຶນມີແຫລ່ງລາຍຮັບພື້ນຖານ ດັ່ງຕໍ່ລົງໄປນີ້:

- ງົບປະມານຂອງລັດ;
- ກູ້ຢືມຈາກສະຖາບັນການເງິນ ພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ ຂອງ ສະພາ ທີ່ປຶກສາກອງທຶນ;
- ການຊ່ວຍເຫລືອລ້າ ຂອງບຸກຄົນ ຫຼື ນິຕິບຸກ ທັງພາຍໃນ ແລະ ຕ່າງປະເທດ;
- ດອກເບ້ຍເງິນຝາກທະນາຄານ;
- ດອກເບ້ຍເງິນກູ້ ທີ່ກອງທຶນໃຫ້ກູ້ຢືມຕາມລະບຽບການ ຂອງກອງທຶນທີ່ໄດ້ຮັບການອະນຸມັດ ໂດຍສະພາທີ່ປຶກສາກອງທຶນ;
- ຜົດດ່ຽງ ຈາກການຈຳໜ່າຍອຸປະກອນ, ພາຫານະອາໄຫລ່ໄຟຟ້າ (ຖ້າມີ) ຕາມການຕົກລົງ ແລະ ໄດ້ຮັບອະນຸມັດ ໂດຍສະພາທີ່ປຶກສາກອງທຶນ;
- ອັດຕາສ່ວນຮ້ອຍ ຈາກຄ່າບໍລິການ ແລະ ຄ່າທຳນຽມໄຟຟ້າຈາກຜູ້ຊົມໃຊ້.

**ມາດຕາ 23: ການເກັບເງິນຄ່າ ອຸປະກອນ ແລະ ຕິດຕັ້ງເບື້ອງຕົ້ນ, ຄ່າບໍລິການ ແລະ ຄ່າທຳນຽມ**

ການເກັບເງິນຄ່າອຸປະກອນແລະຕິດຕັ້ງເບື້ອງຕົ້ນ, ຄ່າບໍລິການ ແລະ ຄ່າທຳນຽມຕ່າງໆ ເຂົ້າ ກອງທຶນ ແມ່ນບໍລິສັດບໍລິການໄຟຟ້າ ເປັນຜູ້ເກັບໂດຍກົງ ຫລື ຜ່ານບໍລິສັດ ບໍລິການໄຟຟ້າ ໂດຍອີງຕາມສັນຍາ. ສ່ວນລາຍລະອຽດ ມອບໃຫ້ສະພາທີ່ປຶກສາ ແລະ ຄະນະອຳນວຍການ ບໍລິຫານກອງທຶນ ສົມທົບກັບ ພາກສ່ວນກ່ຽວຂ້ອງ ເປັນຜູ້ອອກຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ໃນການຈັດຕັ້ງປະຕິບັດຕົວຈິງ.

**ມາດຕາ 24: ບັນຊີເງິນຝາກຂອງກອງທຶນ**

ກອງທຶນຈະເປີດບັນຊີເງິນຝາກໄວ້ທີ່ທະນາຄານຂອງລັດທີ່ໝັ້ນຄົງ, ຊຶ່ງມີສາຂາຢູ່ຫລາຍແຂວງ, ທັງນີ້ ກໍເພື່ອອຳນວຍຄວາມສະດວກ ທາງດ້ານການເງິນ ຂອງບໍລິສັດບໍລິການໄຟຟ້າ.

**ມາດຕາ 25:** **ຫລັກການເບີກຈ່າຍເງິນຈາກກອງທຶນ**

**ການຈ່າຍເງິນຈາກກອງທຶນ ຈະຕ້ອງປະຕິບັດຕາມຫຼັກການ ຕໍ່ລົງໄປນີ້:**

- ການຈ່າຍເງິນໃຫ້ບັນດາບໍລິສັດບໍລິການໄຟຟ້າ ຫລື ຜູ້ທີ່ເຮັດວຽກໃຫ້ແກ່ໂຄງການ ສະໜອງໄຟຟ້າທ້ອງຖິ່ນ ແລະ ຊົນນະບົດອື່ນໆຈະຕ້ອງປະຕິບັດຕາມສັນຍາທີ່ໄດ້ເຊັນກັນໄວ້ເທົ່ານັ້ນ;
- ການຈ່າຍເງິນໃຫ້ບຸກຄົນ ຫລື ນິຕິບຸກຄົນ ທີ່ຮັບປະຕິບັດວຽກ ຫຼື ໄດ້ຮັບການມອບໝາຍວຽກ ຈາກກອງທຶນ ຈະຕ້ອງປະຕິບັດຕາມສັນຍາທີ່ໄດ້ເຊັນກັນໄວ້ເທົ່ານັ້ນ;
- ການຈ່າຍເງິນ ຈະຕ້ອງມີການຢັ້ງຢືນ ດ້ວຍຂໍ້ສັນຍາ ແລະ ເອກະສານຄັດຕິດ ຂອງສັນຍາດັ່ງກ່າວ;
- ທຸກໆການຈ່າຍເງິນ ຈະຕ້ອງໄດ້ປະຕິບັດຕາມຂັ້ນຕອນ ທີ່ສະພາທີ່ປຶກສາກອງທຶນໄດ້ອະນຸມັດແລ້ວເທົ່ານັ້ນ ແລະ ໄດ້ຖືກລະບຸໄວ້ ໃນລະບຽບການດ້ານການເງິນຂອງກອງທຶນ. ສ່ວນຂັ້ນຕອນລະອຽດ ໃນການຈັດແບ່ງທຶນ ແມ່ນອີງໃສ່ຫລັກການ ທີ່ກ່າວໄວ້ຂ້າງເທິງນັ້ນ ແລະ ມອບໃຫ້ສະພາທີ່ປຶກສາກອງທຶນ ເປັນຜູ້ອອກລະບຽບການຕ່າງຫາກ ໂດຍການ ເຊັນອະນຸມັດ ຂອງລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ຫັດຖະກຳ.

**ມາດຕາ 26:** **ເງື່ອນໄຂ ແລະ ວິທີການຈັດແບ່ງທຶນຂອງກອງທຶນ**

ການຈັດແບ່ງທຶນຈະຕ້ອງປະຕິບັດຕາມເງື່ອນໄຂດັ່ງຕໍ່ລົງໄປນີ້:

- ທຶນທີ່ຈະແບ່ງໃຫ້ ສຳລັບປະຕິບັດກິດຈະກຳທັງໝົດ ຈະຕ້ອງບໍ່ເກີນຈຳນວນເງິນທີ່ ກອງທຶນມີຢູ່ ແລະ ມີຄວາມສົມດູນ ກັບລາຍຮັບ ທີ່ຈະເຂົ້າມາສູ່ກອງທຶນ ໃນສົກປີງົບປະມານນັ້ນ;
- ກອງທຶນຈະຕ້ອງຈັດແບ່ງທຶນລະຫວ່າງແຂວງຕ່າງໆ ເພື່ອໃຫ້ແຂວງທີ່ທຸກຍາກ ແລະ ບໍ່ມີເງື່ອນໄຂນຳໃຊ້ໄຟຟ້າ ຈາກສາຍສົ່ງແຫ່ງຊາດ ເປັນຜູ້ໄດ້ຮັບຜົນປະໂຫຍດຫລາຍກວ່າ. ສ່ວນຂັ້ນຕອນລະອຽດ ໃນການຈັດແບ່ງທຶນ ແມ່ນອີງໃສ່ຫລັກການ ທີ່ກ່າວໄວ້ຂ້າງເທິງນັ້ນ ແລະ ມອບໃຫ້ສະພາທີ່ປຶກສາກອງທຶນ ເປັນຜູ້ອອກລະບຽບການຕ່າງຫາກ ໂດຍການເຊັນອະນຸມັດ ຂອງລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ຫັດຖະກຳ.

**ມາດຕາ 27:** **ການຈ່າຍເງິນຈາກກອງທຶນ**

ເງິນຂອງກອງທຶນຈະຕ້ອງຖືກນຳໃຊ້ເຂົ້າໃນການປະຕິບັດວຽກງານດ້ານຕ່າງໆ ດັ່ງນີ້:

- ການສຳຫລວດຂໍ້ມູນ ດ້ານເສດຖະກິດ-ສັງຄົມ ກ່ອນການຕິດຕັ້ງໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ;
- ການວາງແຜນ, ການອອກແບບແຜນຜັງ, ຊື້ອຸປະກອນ ແລະ ການຕິດຕັ້ງ ລະບົບໄຟຟ້າຂັ້ນບ້ານ;
- ການສຶກສາ ແລະ ອອກແບບເພື່ອການພັດທະນາເຕັກໂນໂລຊີສຳລັບໄຟຟ້າຊົນນະບົດ;
- ການບໍລິຫານໃນທ້ອງການ, ການຕິດຕາມ ແລະ ການປະເມີນຜົນ.

**ມາດຕາ 28:** **ການດຸ່ນດ່ຽງເງິນຂອງກອງທຶນ**

ເພື່ອຮັກສາຄວາມດຸ່ນດ່ຽງ, ການໃຊ້ເງິນກອງທຶນຈະຕ້ອງປະຕິບັດດັ່ງຕໍ່ລົງໄປນີ້:

- ກອງທຶນຈະຕ້ອງມີເງິນສຳຮອງໄວ້ຕະຫລອດເວລາ;
- ເງິນແຮ ຈະຕ້ອງມີເງິນໄວ້ໃນບັນຊີຕະຫລອດເວລາ ເພື່ອໃຫ້ພຽງພໍ ສຳລັບການໃຊ້ຈ່າຍຮ່ວງບໍລິຫານ ຫ້ອງການປະຈຳວັນ ແລະ ມີແຮໄວ້ ໃນກໍລະນີມີກິດຈະກຳສຸກເສີນ ເກີດຂຶ້ນ, ຊຶ່ງບໍ່ໄດ້ກຳນົດໄວ້ໃນ ງົບປະມານປະຈຳປີ;
- ການຈັດແບ່ງງົບປະມານຈາກກອງທຶນ ຈະຕ້ອງບໍ່ເກີນຈຳນວນເງິນທີ່ມີຢູ່ ຫຼື ເງິນທີ່ຈະເຂົ້າມາກອງທຶນ ໃນປີງົບປະມານນັ້ນ, ຊຶ່ງລວມທັງເງິນທີ່ເຫລືອຈາກງົບປະມານໃນສົກປີ ຜ່ານມາ;
- ຈຳນວນເງິນທີ່ເຫລືອຈາກງົບປະມານໃນແຕ່ລະປີ ຈະຕ້ອງຍົກໄປເຂົ້າໃນງົບປະມານ ໃນປີຕໍ່ໄປໂດຍປະຕິບັດຕາມຂັ້ນຕອນຂອງຂະບວນການຈັດແບ່ງງົບປະມານຢ່າງຖືກຕ້ອງ.

## ໝວດທີ IV
## ການຕິດຕາມ, ກວດກາ ແລະ ປະເມີນຜົນກອງທຶນ

**ມາດຕາ 29:** **ການກວດກາບັນຊີ**

ການກວດກາບັນຊີການເງິນຂອງກອງທຶນຈະຕ້ອງປະຕິບັດຕາມລະບຽບການທີ່ລັດຖະບານກຳນົດອອກ ແລະ ຕາມຂໍ້ຕົກລົງໃນສັນຍາ ຂອງຜູ້ໃຫ້ທຶນ.

**ມາດຕາ 30:** **ການຕິດຕາມ ແລະ ປະເມີນຜົນກອງທຶນ**

ກອງເລຂາຈະຕ້ອງສົ່ງບົດລາຍງານປະຈຳປີ ໃຫ້ສະພາທີ່ປຶກສາກອງທຶນ ແລະ ຜູ້ໃຫ້ທຶນ, ຊຶ່ງ ໃນບົດລາຍງານຕ້ອງລະບຸລາຍລະອຽດ ກ່ຽວກັບ ສະຖານະພາບຂອງກອງທຶນ ແລະ ບົດລາຍງານການກວດກາ ດ້ານການເງິນໃຫ້ແກ່ ສະພາທີ່ປຶກສາກອງທຶນ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ, ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຢ່າງຊ້າບໍ່ເກີນ ສາມເດືອນ ຫລັງຈາກ ສົກປີງົບປະມານ ໄດ້ສິ້ນສຸດລົງ;

ກອງເລຂາ ຈະຕ້ອງສົ່ງບົດລາຍງານປະຈຳເດືອນ, ສາມເດືອນ ໃຫ້ຄະນະອຳນວຍການ ບໍລິຫານກອງທຶນ ແລະ ສະພາທີ່ປຶກສາກອງທຶນ ຕາມເນື້ອໃນ ທີ່ລະບຸໄວ້ ໃນລະບຽບການ ຂອງກອງທຶນ;

ຜູ້ໃຫ້ທຶນຈະໄດ້ຮັບອະນຸຍາດໃນການຕິດຕາມ ແລະ ປະເມີນຜົນກິດຈະກຳ ດ້ານການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງວຽກງານໄຟຟ້າທ້ອງຖິ່ນ ແລະ ຊົນນະບົດ ໃນຂອບເຂດ ທີ່ຜູ້ໃຫ້ທຶນນັ້ນ ມີສ່ວນກ່ຽວຂ້ອງເທົ່ານັ້ນ. ຄ່າໃຊ້ຈ່າຍສຳລັບການປະເມີນຜົນດັ່ງກ່າວນັ້ນ ແມ່ນຈະ

ຖືກນຳໃຊ້ ງົບປະມານຂອງຜູ້ໃຫ້ທຶນ ແລະ ນຳໃຊ້ຜູ້ປະເມີນຜົນ ທີ່ຜູ້ໃຫ້ທຶນເປັນຜູ້ຄັດເລືອກເອງ. ກອງເລຂາຈະເປັນຜູ້ອຳນວຍຄວາມສະດວກ ໃນການປະເມີນຜົນດັ່ງກ່າວ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 31: ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະ ຫັດຖະກຳ ເປັນເຈົ້າການສົມທົບກັບ ກະຊວງການເງິນ ແລະ ກະຊວງ ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້;

ກອງທຶນພັດທະນາໄຟຟ້າທ້ອງຖິ່ນ ແລະ ຊົນນະບົດມີເຄື່ອງໝາຍ ແລະ ກາປະທັບ ເປັນຂອງຕົນເອງ

**ມາດຕາ 32: ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ລະບຽບການໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ